ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 693/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 04 ທັນວາ 2020

# ຂໍ້ຕົກລົງ
# ວ່າດ້ວຍການກວດສອບພາຍນອກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມຄຸ້ມຄອງສະຖາບັນການເງິນ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບການກວດສອບພາຍນອກ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສະຖາບັນການເງິນດັ່ງກ່າວ ຖືກຕ້ອງ, ໂປ່ງໃສ ແລະ ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ ແນໃສ່ຮັບປະກັນໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີຄວາມເຂັ້ມແຂງ ແລະ ຍືນຍົງ.

**ມາດຕາ 2 ການກວດສອບພາຍນອກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ**

ການກວດສອບພາຍນອກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແມ່ນການຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງລະບົບບັນຊີ, ການບໍລິຫານຈັດການພາຍໃນ ຫຼື ການກວດສອບດ້ານອື່ນ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ຊຶ່ງດຳເນີນໂດຍ ບໍລິສັດກວດສອບ ບົນພື້ນຖານສັນຍາກວດສອບ.

**ມາດຕາ 3 ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຕ້ອງໄດ້ຮັບການກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຕ້ອງໄດ້ຮັບການກວດສອບພາຍນອກຈາກ ບໍລິສັດກວດສອບພາຍນອກ ມີດັ່ງນີ້:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ;

3. ບໍລິສັດຄໍ້າປະກັນສິນເຊື່ອ;

4. ບໍລິສັດເຊົ່າສິນເຊື່ອ ທີ່ມີຊັບສິນສູງກວ່າ ຫ້າ ຕື້ກີບ;

5. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີຊັບສິນສູງກວ່າ ຫ້າ ຕື້ກີບ;

6. ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ມີການເຄື່ອນໄຫວລະເມີດກົດໝາຍ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 4 ບໍລິສັດກວດສອບພາຍນອກ**

ບໍລິສັດກວດສອບພາຍນອກ ແມ່ນບໍລິສັດທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ ຈາກກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ກ່ຽວກັບ ການຈັດຕັ້ງວິຊາຊີບການບັນຊີ ແລະ ກວດສອບພາຍນອກ.

ບໍລິສັດກວດສອບພາຍນອກ ທີ່ຈະດໍາເນີນການກວດສອບພາຍນອກຕໍ່ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງໄດ້ຮັບການຮັບຮອງຈາກກົມຄຸ້ມຄອງສະຖາບັນການເງິນ ຕາມລະບຽບການສະເພາະ.

**ມາດຕາ 5 ການວ່າຈ້າງບໍລິສັດກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສາມາດເລືອກວ່າຈ້າງບໍລິສັດກວດສອບພາຍນອກ ທີ່ຈະມາກວດສອບຕົນ ຕາມລາຍຊື່ທີ່ຖືກຮັບຮອງ ແລ້ວສະເໜີມາຍັງກົມຄຸ້ມຄອງສະຖາບັນການເງິນພິຈາລະນາ. ພາຍຫຼັງໄດ້ຮັບໜັງສືສະເໜີແລ້ວ ກົມຄຸ້ມຄອງສະຖາບັນການເງິນຕ້ອງແຈ້ງຕອບ ເຫັນດີ ຫຼື ບໍ່ເຫັນດີ ຢ່າງເປັນລາຍລັກອັກສອນ ພາຍໃນ ເຈັດ ວັນລັດຖະການ.

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສາມາດເລືອກໃຊ້ບໍລິການບໍລິສັດກວດສອບພາຍນອກໃດໜຶ່ງ ຕິດຕໍ່ກັນບໍ່ເກີນ ສາມ ປີ.

**ມາດຕາ 6 ການລາຍງານຜົນການກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງຖືກດໍາເນີນການກວດສອບພາຍນອກປະຈໍາປີ ໃຫ້ສໍາເລັດພາຍໃນເດືອນ ມີນາ ຂອງປີຖັດໄປ ພ້ອມສົ່ງບົດລາຍງານຜົນການກວດສອບພາຍນອກທັງໝົດ ທີ່ຖືກຮັບຮອງຈາກຜູ້ກວດສອບ ແລະ ຜູ້ຖືກກວດສອບ ໃຫ້ກົມຄຸ້ມຄອງສະຖາບັນການເງິນ ພາຍໃນ ສິບ ວັນລັດຖະການ.

ບົດລາຍງານຜົນການກວດສອບພາຍນອກ ຕ້ອງເປັນພາສາລາວ ແລະ ເປັນສະບັບທີ່ໃຊ້ໄດ້ຢ່າງເປັນທາງການ.

**ມາດຕາ 7 ການເຜີຍແຜ່ຜົນການກວດສອບພາຍນອກ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງເຜີຍແຜ່ບົດລາຍງານຜົນການກວດສອບພາຍນອກປະຈໍາປີຂອງຕົນ ຊ້າສຸດບໍ່ໃຫ້ກາຍເດືອນ ເມສາ ພາຍຫຼັງສິ້ນສຸດປີການບັນຊີ ໂດຍສາມາດເຜີຍແຜ່ຜ່ານເວັບໄຊຂອງຕົນ, ຈັດພິມເປັນປຶ້ມ, ແຜ່ນພັບ ຫຼື ດ້ວຍຮູບການອື່ນ. ສ່ວນສະຖາບັນການເງິນອື່ນ ສາມາດເຜີຍແຜ່ບົດລາຍງານຜົນການກວດສອບພາຍນອກ ປະຈໍາປີຂອງຕົນ ຕາມຄວາມເໝາະສົມ.

**ມາດຕາ 8 ມາດຕະການຕໍ່ຜູ້ລະເມີດ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 9 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງສະຖາບັນການເງິນ, ສາຂາທະນາຄານແຫ່ງ ສປປ ລາວ, ບັນດາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍບໍລິສັດກວດສອບພາຍນອກສະຖາບັນການເງິນ ສະບັບເລກທີ 741/ທຫລ, ລົງວັນທີ 16 ກັນຍາ 2015.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

ສອນໄຊ ສິດພະໄຊ